**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈຳກັດ**

**DAKLAORUCO** ເລກທີ 319 /ລບ-ບສ

ປາກເຊ, ວັນທີ 22 ເດືອນ 06 ປີ 2024

# ແຈ້ງການ

## ເລື່ອງ: ນະໂຍບາຍການຮັບສະໝັກແຮງງານຂອງບໍລິສັດ

ອີງຕາມກົດລະບຽບພາຍໃນຂອງບໍລິສັດທີ່ໄດ້ຜ່ານການອະນຸມັດ;

ອີງຕາມຄູ່ມືຫຼັກສູດການຮັບສະໝັກພະນັກງານຂອງບໍລິສັດ;

ດັ່ງນັ້ນ, ອຳນວຍການບໍລິສັດດັກລັກຣັບເບີຈຳກັດ ຈຶ່ງໄດ້ປະກາດແຈ້ງການກ່ຽວກັບບາງເນື້ອໃນນະໂຍບາຍການຮັບສະໝັກກຳມະກອນຂອງບໍລິສັດ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ແຕ່ລະປີ, ບໍລິສັດໄດ້ປະຕິບັດນະໄຍບາຍຮັບສະໝັກແຮງງານຕາມແຜນບຸກຄະກອນ ແນໃສ່ເພື່ອຕອບສະໜອງຄວາມຕ້ອງການໃນວຽກງານທຸລະກິດການຜະລິດຂອງບໍລິສັດ.

**1. ການຮັບສະໝັກກຳມະກອນຂຶດຢາງ:** ເງື່ອນໄຂໃນການຮັບສະໝັກມີດັ່ງນີ້:

- ອີງຕາມຄວາມຕ້ອງການໃນການຮັບສະໝັກກຳມະກອນໃນແຕ່ລະປີ, ຈາກນັ້ນບໍລິສັດຈະໄດ້ປະກາດແຈ້ງການເພື່ອຮັບສະໝັກກຳມະກອນຂຶດຢາງ.
- ກຳມະກອນໄດ້ຜ່ານການກວດກາສີມືແຮງງານ(ຝຶກອົບຮົມໃໝ່ ຫລື ກວດກາສີມືຕົວຈິງຢູ່ສວນ) ຜົນການກວດກາຈັດໃນປະເພດດີຂຶ້ນໄປ (ເຊິ່ງມີ 4 ປະເພດ: ອ່ອນຫລາຍ, ປານກາງ, ດີ; ເກັ່ງ).
- ຜູ້ອອກແຮງງານຕ້ອງມີອາຍຸນັບແຕ່ 18 ປີຂຶ້ນໄປ, ພ້ອມກັນນັ້ນຍັງມີສຸຂະພາບດີພ້ອມເຮັດສຳເລັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ. ບໍ່ນຳໃຊ້ຫລືຫຍຸ້ງກ່ຽວກັບບັນດາສານເສບຕິດ, ຢາເສບຕິດຕ່າງໆ.
- ຜູ້ອອກແຮງງານສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງຕໍາແໜ່ງວຽກງານທີ່ເປີດຮັບສະໝັກ ຫຼັງຈາກທີ່ໄດ້ຜ່ານການທົດລອງວຽກ (ໄລຍະເວລາໃນການທົດລອງວຽກສູງສຸດແມ່ນ 30 ວັນ).

**2. ການຮັບສະໝັກກຳມະກອນປຸງແຕ່ງຢາງ, ກຳມະກອນເຕັກນິກ:** ເງື່ອນໄຂໃນການຮັບສະໝັກລວມມີ:

- ຜູ້ອອກແຮງງານຕ້ອງມີສີມືແຮງງານເໝາະສົມສອດຄ່ອງກັບຕຳແໜ່ງຮັບສະໝັກ.
- ຜູ້ອອກແຮງງານຕ້ອງມີອາຍຸນັບແຕ່ 18 ປີຂຶ້ນໄປ, ພ້ອມກັນນັ້ນຍັງມີສຸຂະພາບແຂງແຮງພ້ອມເຮັດສຳເລັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ. ບໍ່ນຳໃຊ້ຫລືຍຸ້ງກ່ຽວກັບບັນດາສານເຮັດໃຫ້ເສບຕິດ, ຢາເສບຕິດອື່ນໆ.
- ຜູ້ອອກແຮງງານສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງຕໍາແໜ່ງວຽກງານທີ່ເປີດຮັບສະໝັກ ຫຼັງຈາກທີ່ໄດ້ຜ່ານການທົດລອງວຽກ(ໄລຍະເວລາໃນການທົດລອງວຽກສູງສຸດແມ່ນ 30 ວັນ).

**3. ເອກະສານທີ່ຕ້ອງປະກອບເຂົ້າເຮັດວຽກລວມມີ:**

+ ໃບຄຳຮ້ອງຂໍເຂົ້າເຮັດວຽກ.
+ ຊີວະປະວັດທີ່ໄດ້ຮັບການເຊັນຢັ້ງຢືນຈາກອຳນາດການປົກຄອງບ້ານ.
+ ໃບຢັ້ງຢືນການກວດສຸຂະພາບ.
+ ໃບຢັ້ງຢືນສີມືແຮງງານຂຶດຢາງ (ນຳໃຊ້ສະເພາະກຳມະກອນຂຶດຢາງ).
+ ສຳເນົາໃບຢັ້ງຢືນການສຶກສາ(ໃບປະກາດ) ທີ່ກ່ຽວຂ້ອງ (ຖ້າມີ).

+ ສຳເນົາປື້ມສຳມະໂນຄົວ/ບັດປະຈຳຕົວ.

+ ໃບຢັ້ງຢືນທີ່ຢູ່.

**4. ເງື່ອນໄຂນະໂຍບາຍພິຈາລະນາພິເສດ:**

- ຜູ້ທີ່ມີປະສົບການ, ຜູ້ມີລະດັບສີມືຂັດຢາງ ຈັດໃນປະເພດເກັ່ງ.

- ປະຊາຊົນທີ່ອາໃສດຳລົງຊີວິດ ຢູ່ຕາມບັນດາບ້ານ ໃນເຂດໂຄງການ ຂອງບໍລິສັດ ແລະ ສາມາດຕອບສະໜອງຕາມຄວາມຕ້ອງການໃນຕຳແໜ່ງວຽກງານທີ່ເປີດຮັບສະໝັກ.

- ລູກ,ອ້າຍ,ເອື້ອຍ,ນ້ອງ ຂອງພະນັກງານກຳມະກອນທີ່ເຮັດວຽກຢູ່ບໍລິສັດ.

**5. ເງື່ອນໄຂທີ່ບໍ່ສາມາດສະໝັກໄດ້:**

- ຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ (ອີງຕາມໃບຢັ້ງຢືນທີ່ຢູ່ຂອງນາຍບ້ານ).

- ຜູ້ທີ່ບໍ່ເຫັນດີເຂົ້າຮ່ວມ ກອງທຶນປະກັນສັງຄົມ (ສະຫວັດດີການສັງຄົມ) ແຫ່ງຊາດລາວ ຕາມລະບຽບກົດໝາຍກຳນົດ.

- ຜູ້ທີ່ເຄີຍຖືກບໍລິສັດສຳຫລວດລົງວິໄນ ໄລ່ອອກ ຍ້ອນຜິດກົດລະບຽບ, ຍ້ອນການກະທຳທີ່ຮຸນແຮງ, ມີລັກສະນະຊັກຊວນຄົນອື່ນຕໍ່ຕ້ານ, ທຳລາຍ.

- ຜູ້ທີ່ມີສຸຂະພາບອ່ອນເພຍ ບໍ່ແຂງແຮງ ສຸຂະພາບບໍ່ພ້ອມທີ່ຈະເຮັດວຽກ.

- ຜູ້ທີ່ຍັງບໍ່ມີຄວາມສາມາດ ທີ່ຈະຮັບຜິດຊອບທາງດ້ານກົດໝາຍອາຍາໄດ້, ຜູ້ທີ່ຜິດຕໍ່ລະບຽບກົດໝາຍອາຍາ (ກົດໝາຍລາວ ຫລື ກົດໝາຍຫວຽດນາມ) ກຳລັງຢູ່ໃນຊ່ວງໄລຍະຖືກດຳເນີນຄະດີ ຫລື ກຳລັງຢູ່ໃນຊ່ວງປະຕິບັດຮັບໂທດຈາກອົງການຄຸ້ມຄອງແຫ່ງລັດ.

**6.** ມອບໜ້າທີ່ດັ່ງກ່າວໃຫ້ຫ້ອງ ການ ບໍລິສັດປະສານສົມທົບກັບອຳນວຍການແຕ່ລະນິຄົມເຜີຍແຜ່ ບັນດານະໂຍບາຍຕ່າງໆຂອງບໍລິສັດໃຫ້ຜູ້ອອກແຮງງານທຸກຄົນໄດ້ຮັບຮູ້ຢ່າງທົ່ວເຖິງ. ພ້ອມດຽວກັນນັ້ນກໍ່ຕ້ອງລົງຕິດຕາມກວດກາການປະຕິບັດວຽກງານດັ່ງກ່າວຢູ່ແຕ່ລະນິຄົມເປັນປະຈຳ ແລະ ລາຍງານໃຫ້ທ່ານອຳນວຍການບໍລິສັດຮັບຊາບເພື່ອແກ້ໄຂບັນດາບັນຫາທີ່ຍັງຂ້ອງຄາ.

**7.** ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການອື່ນປ່ຽນແທນ.

ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້, ແມ່ນແຈ້ງການຂອງທ່ານຜູ່ອຳນວຍການບໍລິສັດ. ໃຫ້ບັນດາຫ້ອງການຕ່າງໆທີ່ກ່ຽວຂ້ອງ ແລະ ບັນດາໜ່ວຍງານທັງໝົດ ນຳໄປຈັດຕັ້ງປະຕິບັດ.

**ອຳນວຍການບໍລິສັດ**

ກະຊວງ ກະສິກຳ ແລະ ປ່າໄມ້
ບໍລິສັດ ດັກລັກ ຣັບເບີ ຈຳກັດ
DAKLAK RUBBER CO.,LTD
ແຂວງ ຈຳປາ ສັກ

*Nguyễn Đức Hạnh*

*ບ່ອນສົ່ງ:*

- ຄະນະອຳນວຍການ;
- ຫ້ອງການຕ່າງໆຂອງບໍລິສັດ;
- ບັນດາກຸ່ມກອງໜ່ວຍງານຕ່າງໆ;
- ສຳເນົາ ຂາອອກ-ຂາເຂົ້າ